# ຂໍ້ຕົກລົງ

## ລະຫວ່າງ ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ລັດຖະບານ ແຫ່ງ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ ວ່າດ້ວຍ ການແກ້ໄຂບັນຫາຜູ້ຍົກຍ້າຍຕັ້ງພູມລຳເນົາຕາມລຳພັງໃຈ ແລະ ສ້າງຄອບຄົວບໍ່ຖືກລະບຽບຢູ່ຕາມບໍລິເວນຊາຍແດນຂອງສອງປະເທດ

----------

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ລັດຖະບານ ແຫ່ງ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ ( ຕໍ່ໄປນີ້ເອີ້ນຫຍໍ້ວ່າ “ສອງຝ່າຍ” );

ດ້ວຍຄວາມປາດຖະໜາຢາກສ້າງຊາຍແດນ ລາວ-ຫວຽດນາມ ໃຫ້ກາຍເປັນຊາຍແດນ ແຫ່ງ ສັນຕິພາບ, ມິດຕະພາບ, ສະຖຽນລະພາບ, ການຮ່ວມມື ແລະ ການພັດທະນາແບບຍືນຍົງ ເພື່ອປະກອບສ່ວນເຂົ້າໃນການປົກປັກຮັກສາຄວາມສະຫງົບສຸກຢູ່ບໍລິເວນຊາຍແດນ;

ໂດຍປະຕິບັດຕາມສັນຍາ ວ່າດ້ວຍລະບຽບການຊາຍແດນ ລະຫວ່າງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ ສະບັບລົງວັນທີ 01 ມີນາ 1990 ແລະ ອະນຸສັນຍາດັດແກ້ເພີ່ມເຕີມສັນຍາ ວ່າດ້ວຍລະບຽບການຊາຍແດນ ລະຫວ່າງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ ສະບັບລົງວັນທີ 31 ສິງຫາ 1997;

ບົນຈິດໃຈແຫ່ງສາຍພົວພັນມິດຕະພາບ, ຄວາມສາມັກຄີແບບພິເສດ ແລະ ການຮ່ວມມືຮອບດ້ານ ລະຫວ່າງ ລາວ-ຫວຽດນາມ ເພື່ອເພີ່ມທະວີຄວາມເຂົ້າອົກເຂົ້າໃຈ ແລະ ຮັດແໜ້ນຄວາມໄວ້ເນື້ອເຊື່ອໃຈກັນ;

ສອງຝ່າຍໄດ້ຮ່ວມກັນເຮັດຂໍ້ຕົກລົງ ວ່າດ້ວຍການແກ້ໄຂບັນຫາຜູ້ຍົກຍ້າຍຕັ້ງພູມລຳເນົາຕາມລຳພັງໃຈ ແລະ ສ້າງຄອບຄົວບໍ່ຖືກລະບຽບຢູ່ຕາມບໍລິເວນຊາຍແດນຂອງສອງປະເທດ ດັ່ງລຸ່ມນີ້:

### ມາດຕາ 1
### ການອະທິບາຍຄຳສັບ

ບັນດາຄຳສັບທີ່ໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍດັ່ງນີ້:

1. **“ບໍລິເວນຊາຍແດນ”** ໝາຍເຖິງຂອບເຂດບັນດາເມືອງຂອງລາວ ແລະ ຂອບເຂດບັນດາເມືອງຂອງຫວຽດນາມ ທີ່ຕິດກັບຊາຍແດນປະເທດ ລາວ-ຫວຽດນາມ.

2. **"ຜູ້ຍົກຍ້າຍຕັ້ງພູມລຳເນົາຕາມລຳພັງໃຈ"** ໝາຍເຖິງຄົນລາວ ທີ່ໄດ້ຍົກຍ້າຍໄປຕັ້ງພູມລຳເນົາຢູ່ຕາມບໍລິເວນຊາຍແດນເບື້ອງຫວຽດນາມ ຫຼື ຄົນຫວຽດນາມ ທີ່ໄດ້ຍົກຍ້າຍມາຕັ້ງພູມລຳເນົາຢູ່ຕາມບໍລິເວນຊາຍແດນເບື້ອງລາວ ຊຶ່ງອຳນາດການປົກຄອງຂອງປະເທດທີ່ອາໄສຢູ່ ບໍ່ໄດ້ອອກເອກະສານຢັ້ງຢືນສັນຊາດ, ສຳມະໂນຄົວ ແລະ ເອກະສານອື່ນໆ ຕາມລະບຽບກົດໝາຍ.

3. **"ການສ້າງຄອບຄົວບໍ່ຖືກລະບຽບ"** ໝາຍເຖິງການສ້າງຄອບຄົວ ລະຫວ່າງ ຄົນລາວກັບຄົນຫວຽດນາມຢູ່ຕາມບໍລິເວນຊາຍແດນຂອງສອງປະເທດ ໂດຍບໍ່ໄດ້ຈົດທະບຽນແຕ່ງດອງຕາມລະບຽບກົດໝາຍຂອງແຕ່ລະປະເທດ.

4. **"ປະເທດທີ່ອາໄສຢູ່"** ໝາຍເຖິງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຫຼື ສາທາລະນະລັດສັງຄົມນິຍົມ ຫວຽດນາມ ຊຶ່ງເປັນບ່ອນຜູ້ຍົກຍ້າຍຕັ້ງພູມລຳເນົາຕາມລຳພັງໃຈພວມອາໄສຢູ່.

5. **"ປະເທດເດີມ"** ໝາຍເຖິງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຫຼື ສາທາລະນະລັດສັງຄົມນິຍົມ ຫວຽດນາມ ຊຶ່ງເປັນບ່ອນຜູ້ຍົກຍ້າຍຕັ້ງພູມລຳເນົາຕາມລຳພັງໃຈອາໄສຢູ່ກ່ອນການຍົກຍ້າຍໄປຢູ່ໃນດິນແດນຂອງປະເທດນັ້ນ.

6. **"ສັນຊາດເດີມ"** ໝາຍເຖິງສັນຊາດຂອງຜູ້ຍົກຍ້າຍຕັ້ງພູມລຳເນົາຕາມລຳພັງໃຈ.

## ມາດຕາ 2
## ຫຼັກການແກ້ໄຂ

ສອງຝ່າຍເຫັນດີນຳກັນວ່າ ຂໍ້ຕົກລົງວ່າດ້ວຍການແກ້ໄຂບັນຫາຜູ້ຍົກຍ້າຍຕັ້ງພູມລຳເນົາຕາມລຳພັງໃຈ ແລະ ສ້າງຄອບຄົວບໍ່ຖືກລະບຽບຢູ່ຕາມບໍລິເວນຊາຍແດນຂອງສອງປະເທດ ແມ່ນບົນພື້ນຖານເຄົາລົບບັນດາຫຼັກການດັ່ງນີ້:

1. ຮັບປະກັນເພີ່ມທະວີສາຍພົວພັນມິດຕະພາບທີ່ເປັນມູນເຊື້ອ, ຄວາມສາມັກຄີແບບພິເສດ ແລະ ການຮ່ວມມືຮອບດ້ານ ລະຫວ່າງ ລາວ-ຫວຽດນາມ ບົນພື້ນຖານເຄົາລົບນັບຖືບັນດາຫຼັກການພື້ນຖານທາງດ້ານກົດໝາຍຂອງແຕ່ລະປະເທດ.

2. ບົນຈິດໃຈມະນຸດສະທຳ, ຮັບປະກັນສິດ ແລະ ຜົນປະໂຫຍດອັນຊອບທຳຂອງຜູ້ຍົກຍ້າຍຕັ້ງພູມລຳເນົາຕາມລຳພັງໃຈ, ສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ຜູ້ຍົກຍ້າຍຕັ້ງພູມລຳເນົາຕາມລຳພັງໃຈທີ່ເປັນເປົ້າໝາຍ ຊຶ່ງໄດ້ກຳນົດໄວ້ໃນມາດຕາ 3 ຂອງຂໍ້ຕົກລົງສະບັບນີ້ ເພື່ອໃຫ້ເຂົາເຈົ້າສາມາດດຳລົງຊີວິດທີ່ໝັ້ນຄົງ, ເຊື່ອມໂຍງເຂົ້າກັບວິຖີຊີວິດເສດຖະກິດ, ວັດທະນະທຳ-ສັງຄົມ ຂອງປະເທດທີ່ອາໄສຢູ່ ແລະ ປະເທດເດີມ.

3. ສະກັດກັ້ນການຈັດຕັ້ງ, ບຸກຄົນ ຫຼື ກຸ່ມຄົນທີ່ກໍ່ຄວາມບໍ່ສະຫງົບ ແລະ ຄວາມບໍ່ເປັນລະບຽບຮຽບຮ້ອຍ ຢູ່ຕາມບໍລິເວນຊາຍແດນຂອງສອງປະເທດ.

## ມາດຕາ 3
## ເປົ້າໝາຍທີ່ໄດ້ຮັບການແກ້ໄຂ

1. ຜູ້ທີ່ໄດ້ຮັບອະນຸຍາດໃຫ້ອາໄສຢູ່:

   1.1 ສໍາລັບຜູ້ຍົກຍ້າຍຕັ້ງພູມລໍາເນົາຕາມລໍາພັງໃຈຢູ່ຕາມບໍລິເວນຊາຍແດນຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຫຼື ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ ແຕ່ປີ 1985 ຄືນຫຼັງ, ລັດຖະບານຂອງສອງປະເທດພິຈາລະນາໃຫ້ອາໄສຢູ່ໄດ້.

   1.2 ສໍາລັບຜູ້ຍົກຍ້າຍຕັ້ງພູມລໍາເນົາຕາມລໍາພັງໃຈຢູ່ຕາມບໍລິເວນຊາຍແດນຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຫຼື ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ ແຕ່ປີ 1986 ເຖິງວັນລົງນາມຂໍ້ຕົກລົງສະບັບນີ້ ຈະໄດ້ພິຈາລະນາຕາມແຕ່ລະກໍລະນີ ໂດຍໃຫ້ມີບັນດາເງື່ອນໄຂດັ່ງນີ້:

      1.2.1 ຜູ້ທີ່ເຄົາລົບນັບຖືລະບຽບກົດໝາຍຂອງປະເທດທີ່ອາໄສຢູ່ ແລະ ບໍ່ລະເມີດກົດໝາຍອາຍາ;

      1.2.2 ຜູ້ທີ່ມີພື້ນຖານການດໍາລົງຊີວິດທີ່ໝັ້ນຄົງ, ມີເຮືອນຢູ່ຖາວອນ ແລະ ມີທີ່ດິນທໍາມາຫາກິນຢູ່ປະເທດທີ່ອາໄສຢູ່;

      1.2.3 ຜູ້ທີ່ບໍ່ມີຄໍາສັ່ງຈັບຕົວ ຫຼື ຜູ້ທີ່ບໍ່ຖືກປະຕິບັດຄໍາຕັດສິນຂອງສານຕາມລະບຽບກົດໝາຍຂອງປະເທດເດີມ.

2. ຜູ້ຕ້ອງສົ່ງກັບຄືນປະເທດເດີມ:

   2.1 ຜູ້ຍົກຍ້າຍຕັ້ງພູມລໍາເນົາຕາມລໍາພັງໃຈຢູ່ຕາມບໍລິເວນຊາຍແດນຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຫຼື ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ ແຕ່ປີ 1986 ເຖິງວັນລົງນາມຂໍ້ຕົກລົງສະບັບນີ້ ທີ່ບໍ່ຄົບຕາມ 3 ເງື່ອນໄຂດັ່ງໄດ້ກໍານົດໄວ້ໃນຂໍ້ 1.2 ຂອງມາດຕານີ້ ແມ່ນໃຫ້ສົ່ງກັບຄືນປະເທດເດີມ.

   2.2 ຜູ້ຍົກຍ້າຍຕັ້ງພູມລໍາເນົາຕາມລໍາພັງໃຈ ພາຍຫຼັງທີ່ສອງຝ່າຍໄດ້ລົງນາມຂໍ້ຕົກລົງສະບັບນີ້ແລ້ວ ແມ່ນບໍ່ພິຈາລະນາຢ່າງເດັດຂາດ ແລະ ຖືວ່າເປັນຜູ້ທີ່ເຂົ້າເມືອງຜິດກົດໝາຍ. ສອງຝ່າຍເປັນເອກະພາບກັນພິສູດຫຼັກຖານ, ດໍາເນີນການມອບ-ຮັບ ຈໍານວນຄົນດັ່ງກ່າວ ພາຍໃນກໍານົດ 45 ວັນ ນັບແຕ່ວັນພິສູດຫຼັກຖານເປັນຕົ້ນໄປ ແລະ ແຈ້ງບັນຊີລາຍຊື່, ວັນເວລາ, ສະຖານທີ່ໃຫ້ກັນຊາບກ່ອນການມອບ-ຮັບ ຢ່າງໜ້ອຍສຸດ 15 ວັນ.

3. ກ່ຽວກັບການສ້າງຄອບຄົວບໍ່ຖືກລະບຽບ.

ບົນຈິດໃຈມະນຸດສະທຳ, ເຄົາລົບນັບຖືຮີດຄອງປະເພນີຂອງກັນແລະກັນ ແລະ ສາຍພົວພັນມິດຕະພາບແບບພິເສດ ລາວ-ຫວຽດນາມ, ສອງຝ່າຍເຫັນດີເປັນເອກະພາບກັນສ້າງເງື່ອນໄຂອັນສະດວກໃຫ້ແກ່ບຸກຄົນຈຳນວນດັ່ງກ່າວ ໄດ້ຂຶ້ນທະບຽນແຕ່ງດອງ ຕາມລະບຽບກົດໝາຍຂອງແຕ່ລະປະເທດ.

ພາຍຫຼັງຈົດທະບຽນແຕ່ງດອງ, ຄູ່ຜົວເມຍອາດຈະຂໍອະນຸຍາດອາໄສຢູ່ດິນແດນຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຫຼື ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ ແລະ ຕ້ອງປະຕິບັດຕາມລະບຽບກົດໝາຍຂອງແຕ່ລະປະເທດ.

## ມາດຕາ 4
## ນະໂຍບາຍທີ່ນຳໃຊ້

1. ສຳລັບຜູ້ທີ່ອະນຸຍາດໃຫ້ອາໄສຢູ່:

ບົນພື້ນຖານຄວາມສະໝັກໃຈ ແລະ ຫຼັກການທີ່ໄດ້ກຳນົດໄວ້ໃນມາດຕາ 2 ຂອງຂໍ້ຕົກລົງສະບັບນີ້, ສອງຝ່າຍເປັນເອກະພາບກັນອະນຸຍາດໃຫ້ຂໍເອົາສັນຊາດຂອງປະເທດທີ່ອາໄສຢູ່, ຂຶ້ນສຳມະໂນຄົວ ແລະ ອອກເອກະສານອື່ນໆ ຕາມລະບຽບກົດໝາຍຂອງແຕ່ລະປະເທດ; ພ້ອມກັນນັ້ນຈະສ້າງເງື່ອນໄຂອຳນວຍຄວາມສະດວກດ້ານຕ່າງໆ ໃຫ້ຜູ້ທີ່ໄດ້ອາໄສຢູ່ໃນການປະກອບບັນດາເອກະສານເຫຼົ່ານັ້ນ.

2. ສຳລັບຜູ້ທີ່ຕ້ອງສົ່ງກັບຄືນປະເທດເດີມ:

ສອງຝ່າຍໃຫ້ຄວາມຊ່ວຍເຫຼືອ ກ່ຽວກັບຂັ້ນຕອນໃນການປະກອບເອກະສານການຈັດສົ່ງ, ການຮັບເອົາຄືນ ແລະ ຊັບສິນບັດຂອງເຂົາເຈົ້າ, ສ້າງເງື່ອນໄຂອັນສະດວກກ່ຽວກັບພື້ນຖານດ້ານວັດຖຸໃນການທຳມາຫາກິນ ແລະ ການດຳລົງຊີວິດຢ່າງໝັ້ນຄົງຢູ່ສະຖານທີ່ໃໝ່.

## ມາດຕາ 5
## ການຈັດຕັ້ງປະຕິບັດ

1. ສອງຝ່າຍມອບໃຫ້ຄະນະຜູ້ແທນຊາຍແດນ ລາວ-ຫວຽດນາມ:

   1.1 ຊີ້ນຳແກ້ໄຂບັນຫາຜູ້ຍົກຍ້າຍຕັ້ງພູມລຳເນົາຕາມລຳພັງໃຈ ແລະ ສ້າງຄອບຄົວບໍ່ຖືກລະບຽບຢູ່ຕາມບໍລິເວນຊາຍແດນຂອງສອງປະເທດ.

1.2 ກຳນົດບັນດາມາດຕະການ ແລະ ກົນໄກການຮ່ວມມື ເພື່ອສະກັດກັ້ນສະພາບການຍົກຍ້າຍຕັ້ງພູມລຳເນົາຕາມລຳພັງໃຈຄືນໃໝ່ຢູ່ຕາມບໍລິເວນຊາຍແດນລາວ-ຫວຽດນາມ ຄື:

1.2.1 ເພີ່ມທະວີການໂຄສະນາສຶກສາອົບຮົມກ່ຽວກັບບັນດາຂໍ້ຕົກລົງສອງຝ່າຍ ແລະ ລະບຽບກົດໝາຍພາຍໃນຂອງຕົນ ໃຫ້ປະຊາຊົນຢູ່ບໍລິເວນຊາຍແດນລາວ-ຫວຽດນາມ;

1.2.2 ປັບປຸງພື້ນຖານໂຄງລ່າງທີ່ຈຳເປັນ ແລະ ສ້າງວຽກເຮັດງານທຳທີ່ໝັ້ນຄົງ ເພື່ອປັບປຸງຊີວິດການເປັນຢູ່ຂອງປະຊາຊົນຢູ່ບໍລິເວນຊາຍແດນ;

1.2.3 ລັດຖະບານຂອງສອງປະເທດ ພິຈາລະນາມາດຕະການອັນເດັດຂາດ ເພື່ອສະກັດກັ້ນຜູ້ຍົກຍ້າຍຕັ້ງພູມລຳເນົາຄືນໃໝ່ ແລະ ມາໃໝ່.

2. ສອງຝ່າຍມອບໝາຍໃຫ້ກະຊວງການຕ່າງປະເທດ ສ້າງຕັ້ງຄະນະວິຊາການປະສົມ ຊຶ່ງລວມມີຜູ້ຕາງໜ້າຈາກກະຊວງ, ຂະແໜງການທີ່ກ່ຽວຂ້ອງ ເພື່ອເປັນເສນາທິການ, ຊ່ວຍວຽກໃຫ້ສອງຫົວໜ້າຄະນະຜູ້ແທນຊາຍແດນ ລາວ-ຫວຽດນາມ ໃນການປະສານສົມທົບກັນຊີ້ນຳ, ຊຸກຍູ້, ກວດກາບັນດາອຳນາດການປົກຄອງທ້ອງຖິ່ນແກ້ໄຂບັນຫາຜູ້ຍົກຍ້າຍຕັ້ງພູມລຳເນົາຕາມລຳພັງໃຈ ແລະ ສ້າງຄອບຄົວບໍ່ຖືກລະບຽບຢູ່ຕາມບໍລິເວນຊາຍແດນ. ຫົວໜ້າຄະນະວິຊາການປະສົມ ແມ່ນຜູ້ຕາງໜ້າຄະນະກຳມະການຊາຍແດນຂອງທັງສອງປະເທດ. ການເຄື່ອນໄຫວວຽກງານຂອງຄະນະວິຊາການປະສົມ ແມ່ນຢູ່ພາຍໃຕ້ການຊີ້ນຳໂດຍກົງຂອງສອງຫົວໜ້າຄະນະຜູ້ແທນຊາຍແດນ ລາວ-ຫວຽດ ນາມ.

3. ສອງຝ່າຍ ມອບໃຫ້ບັນດາອຳນາດການປົກຄອງຄູ່ແຂວງຊາຍແດນຂອງສອງປະເທດຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ພາຍໃຕ້ການຊີ້ນຳຂອງຫົວໜ້າຄະນະຜູ້ແທນຊາຍແດນ ລາວ-ຫວຽດນາມ. ບັນດາອຳນາດການປົກຄອງຄູ່ແຂວງຊາຍແດນ ມີໜ້າທີ່ລະອຽດດັ່ງນີ້:

3.1 ສ້າງຕັ້ງໜ່ວຍວິຊາການປະສົມ ເພື່ອດຳເນີນການກວດກາ, ເກັບກຳສະຖິຕິ, ແຍກປະເພດຕາມແບບຟອມທີ່ສອງຝ່າຍເປັນເອກະພາບກັນ ແລະ ກຳນົດມາດຕະການແກ້ໄຂເປົ້າໝາຍຜູ້ທີ່ຍົກຍ້າຍຕັ້ງພູມລຳເນົາຕາມລຳພັງໃຈ ແລະ ສ້າງຄອບຄົວບໍ່ຖືກລະບຽບ ໂດຍອີງຕາມຄຳເຫັນຂອງອຳນາດການປົກຄອງທ້ອງຖິ່ນຂັ້ນພື້ນຖານບ່ອນທີ່ເປົ້າໝາຍອາໄສຢູ່;

3.2 ເປັນເອກະພາບກັນ ກ່ຽວກັບບັນຊີລາຍຊື່ຜູ້ທີ່ໄດ້ຮັບອະນຸຍາດໃຫ້ອາໄສຢູ່ ແລະ ຜູ້ທີ່ຕ້ອງສົ່ງກັບຄືນປະເທດເດີມ ເພື່ອລາຍງານຕໍ່ສອງຫົວໜ້າຄະນະຜູ້ແທນຊາຍແດນລາວ-ຫວຽດນາມ;

3.3 ແນະນຳ, ຊຸກຍູ້ ແລະ ຊ່ວຍເຫຼືອໃຫ້ສຳເລັດທຸກຂັ້ນຕອນການປະກອບເອກະສານຂໍສັນຊາດ, ຂຶ້ນທະບຽນຄອບຄົວ, ສຳມະໂນຄົວ ແລະ ເອກະສານອື່ນໆທີ່ກ່ຽວຂ້ອງ ໃຫ້ແກ່ຜູ້ທີ່ໄດ້ຮັບອະນຸຍາດໃຫ້ອາໄສຢູ່;

3.4 ປຸກລະດົມ, ຂົນຂວາຍ ແລະ ແນະນຳໃຫ້ຜູ້ບໍ່ໄດ້ຮັບອະນຸຍາດໃຫ້ອາໄສຢູ່ ກັບຄືນປະເທດເດີມ; ກຳນົດແຜນການລະອຽດກ່ຽວກັບການມອບ-ຮັບ ແລະ ການປະຕິບັດມາດຕະການບັງຄັບຕໍ່ເປົ້າໝາຍໃນກໍລະນີຈຳເປັນ.

4. ຄະນະວິຊາການປະສົມ ແລະ ໜ່ວຍວິຊາການປະສົມຂອງສອງຝ່າຍ ຈັດກອງປະຊຸມສາມັນສອງຄັ້ງຕໍ່ປີ ໂດຍຜັດປ່ຽນກັນເປັນເຈົ້າພາບ. ໃນກໍລະນີຈໍາເປັນ ແລະ ຮີບດ່ວນ, ຝ່າຍໃດໜຶ່ງກໍສາມາດສະເໜີຈັດກອງປະຊຸມວິສາມັນໄດ້.

5. ໜ່ວຍວິຊາການປະສົມຕ້ອງລາຍງານຜົນຂອງກອງປະຊຸມ ແລະ ຄວາມຄືບໜ້າໃນການຈັດຕັ້ງປະຕິບັດວຽກງານຕໍ່ອໍານາດການປົກຄອງຄູ່ແຂວງຊາຍແດນ; ຄະນະວິຊາການປະສົມຕ້ອງລາຍງານຜົນຂອງກອງປະຊຸມ ແລະ ຄວາມຄືບໜ້າໃນການຈັດຕັ້ງປະຕິບັດວຽກງານ ຕໍ່ທິວໜ້າຄະນະຜູ້ແທນຊາຍແດນ ລາວ-ຫວຽດນາມ.

## ມາດຕາ 6
## ກໍານົດເວລາໃນການຈັດຕັ້ງປະຕິບັດ

ຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຈັດຕັ້ງປະຕິບັດພາຍໃນກໍານົດ 03 ປີ ນັບແຕ່ວັນທີ່ມີຜົນບັງຄັບໃຊ້ເປັນຕົ້ນໄປ, ລະອຽດດັ່ງນີ້:

- ການປະກອບໂຄງຮ່າງການຈັດຕັ້ງໃຫ້ສໍາເລັດພາຍໃນກໍານົດ 03 ເດືອນ;
- ການສໍາຫຼວດ, ກວດກາ, ແຍກປະເພດ ແລະ ຂຶ້ນບັນຊີລາຍຊື່ຜູ້ຍົກຍ້າຍຕັ້ງພູມລໍາເນົາຕາມລໍາພັງໃຈຢູ່ບັນດາຄູ່ແຂວງຊາຍແດນ ໃຫ້ສໍາເລັດພາຍໃນກໍານົດ 10 ເດືອນ;
- ສໍາເລັດຂັ້ນຕອນ ການຮັບຮອງບັນຊີຜູ້ຍົກຍ້າຍຕັ້ງພູມລໍາເນົາຕາມລໍາພັງໃຈຢູ່ຕາມບໍລິເວນຊາຍແດນ ລາວ-ຫວຽດນາມ ພາຍໃນກໍານົດ 03 ເດືອນ;
- ແນະນໍາປະຊາຊົນປະກອບເອກະສານທີ່ຈໍາເປັນໃຫ້ສໍາເລັດເພື່ອຂໍເອົາສັນຊາດ, ທະບຽນຄອບຄົວ ແລະ ເອກະສານອື່ນໆ ເພື່ອສະເໜີຕໍ່ອົງການທີ່ມີສິດອໍານາດຂອງລັດພິຈາລະນາ, ຕົກລົງ; ພ້ອມກັນນັ້ນ, ໃຫ້ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງດໍາເນີນການມອບ-ຮັບ ຜູ້ຍົກຍ້າຍຕັ້ງພູມລໍາເນົາຕາມລໍາພັງໃຈ ທີ່ຢູ່ໃນປະເພດສົ່ງກັບຄືນປະເທດເດີມ ແລະ ຈັດສັນບ່ອນທໍາມາຫາກິນ, ທີ່ຢູ່ອາໄສ, ໃຫ້ເຂົາເຈົ້າມີການດໍາລົງຊີວິດທີ່ໝັ້ນຄົງໃຫ້ສໍາເລັດພາຍໃນກໍານົດ 20 ເດືອນ.

## ມາດຕາ 7
## ການຮັບຮອງບັນຊີລາຍຊື່
## ຜູ້ຍົກຍ້າຍຕັ້ງພູມລໍາເນົາຕາມລໍາພັງໃຈ ແລະ ສ້າງຄອບຄົວບໍ່ຖືກລະບຽບ

1. ໜ່ວຍວິຊາການປະສົມມີໜ້າທີ່ດໍາເນີນການກວດກາ, ເກັບກໍາສະຖິຕິ, ແຍກປະເພດ, ຂຶ້ນບັນຊີລາຍຊື່ ແລະ ສະເໜີວິທີແກ້ໄຂສໍາລັບແຕ່ລະເປົ້າໝາຍໃນການຍົກຍ້າຍຕັ້ງພູມລໍາເນົາຕາມລໍາພັງໃຈ ແລະ

ສ້າງຄອບຄົວບໍ່ຖືກລະບຽບ ແລ້ວລາຍງານຕໍ່ອຳນາດການປົກຄອງຂັ້ນແຂວງຊາຍແດນ ດັ່ງທີ່ໄດ້ກຳນົດໄວ້ໃນມາດຕາ 3 ຂອງຂໍ້ຕົກລົງສະບັບນີ້.

2. ນັບແຕ່ວັນສຳເລັດການແຍກປະເພດ, ການຂຶ້ນບັນຊີລາຍຊື່ແຕ່ລະເປົ້າໝາຍຕົວຈິງ, ໜ່ວຍວິຊາການປະສົມມີໜ້າທີ່ລາຍງານບັນຊີລາຍຊື່ ແລະ ຄຳເຫັນຂອງຕົນຢ່າງເປັນລາຍລັກອັກສອນຕໍ່ອຳນາດການປົກຄອງຂັ້ນແຂວງຊາຍແດນທີ່ກ່ຽວຂ້ອງ ພາຍໃນກຳນົດ 15 ວັນ.

3. ນັບແຕ່ວັນໄດ້ຮັບເອກະສານຢ່າງເປັນລາຍລັກອັກສອນຈາກໜ່ວຍວິຊາການປະສົມ, ອຳນາດການປົກຄອງບັນດາຄູ່ແຂວງຊາຍແດນມີໜ້າທີ່ພິຈາລະນາ ແລະ ເອກະພາບກັນກ່ຽວກັບບັນຊີລາຍຊື່ ແລ້ວລາຍງານຕໍ່ຫົວໜ້າຄະນະຜູ້ແທນຊາຍແດນຂອງແຕ່ລະຝ່າຍ ເພື່ອຮັບຮອງພາຍໃນກຳນົດ 30 ວັນ.

4. ນັບແຕ່ວັນໄດ້ຮັບລາຍງານຈາກອຳນາດການປົກຄອງບັນດາຄູ່ແຂວງຊາຍແດນ, ຫົວໜ້າຄະນະຜູ້ແທນຊາຍແດນຂອງແຕ່ລະຝ່າຍຮັບຮອງເອົາບັນຊີລາຍຊື່ ແລະ ແຈ້ງຄຳເຫັນຂອງຕົນ ກ່ຽວກັບການແກ້ໄຂໃຫ້ອີກຝ່າຍໜຶ່ງຊາບ ໂດຍຜ່ານທາງການທູດ ພາຍໃນກຳນົດ 45 ວັນ.

## ມາດຕາ 8
## ການຂໍເອົາສັນຊາດຂອງປະເທດທີ່ອາໄສຢູ່

1. ສອງຝ່າຍເຫັນດີ ຈະເລັ່ງລັດດຳເນີນຂັ້ນຕອນທີ່ຈຳເປັນຕາມຂໍ້ກຳນົດຂອງກົດໝາຍ ວ່າດ້ວຍສັນຊາດຂອງປະເທດຕົນ ແລະ ຕາມເນື້ອໃນຈິດໃຈທີ່ໄດ້ກຳນົດໄວ້ໃນຂໍ້ 1 ມາດຕາ 4 ຂອງຂໍ້ຕົກລົງສະບັບນີ້ ພິຈາລະນາໃຫ້ຈຳນວນຜູ້ທີ່ມີຄວາມມຸ້ງຫວັງຕາມບັນຊີລາຍຊື່ທີ່ໄດ້ກ່າວມາຂ້າງເທິງນີ້ໄດ້ຮັບສັນຊາດ ແລະ ເມື່ອຈຳນວນບຸກຄົນເຫຼົ່ານີ້ໄດ້ຮັບສັນຊາດຂອງປະເທດທີ່ອາໄສຢູ່ແລ້ວ ສັນຊາດເດີມຈະເສຍໄປ.

2. ພາຍຫຼັງແກ້ໄຂການໃຫ້ສັນຊາດ ຕໍ່ກັບຜູ້ຂໍສັນຊາດທັງໝົດຕາມທີ່ໄດ້ກຳນົດໄວ້ໃນບັນຊີລາຍຊື່ທີ່ໄດ້ກ່າວມາຂ້າງເທິງນີ້ສຳເລັດແລ້ວ, ອົງການທີ່ມີສິດອຳນາດຂັ້ນແຂວງຊາຍແດນ ຕ້ອງເຮັດບົດສະຫຼຸບພ້ອມທັງຄັດຕິດບັນຊີລາຍຊື່ຜູ້ທີ່ໄດ້ຮັບສັນຊາດ ແລະ ຜູ້ທີ່ບໍ່ທັນໄດ້ຮັບສັນຊາດ ເພື່ອລາຍງານຫົວໜ້າຄະນະຜູ້ແທນຊາຍແດນຂອງຕົນ.

3. ຫົວໜ້າຄະນະຜູ້ແທນຊາຍແດນຝ່າຍທີ່ໃຫ້ສັນຊາດ ຕ້ອງມີຈົດໝາຍແຈ້ງບັນຊີລາຍຊື່ຜູ້ທີ່ໄດ້ຮັບສັນຊາດໃຫ້ແກ່ຫົວໜ້າຄະນະຜູ້ແທນຊາຍແດນຂອງອີກຝ່າຍໜຶ່ງຊາບ ໂດຍຜ່ານທາງການທູດ.

## ມາດຕາ 9
## ການອອກໃບທະບຽນແຕ່ງດອງ ແລະ ເອກະສານອື່ນໆ

1. ນັບແຕ່ວັນໄດ້ຮັບແຈ້ງການ ກ່ຽວກັບການຮັບຮອງບັນຊີລາຍຊື່ຜູ້ທີ່ໄດ້ຮັບອະນຸຍາດໃຫ້ອາໄສຢູ່ ຈາກຫົວໜ້າຄະນະຜູ້ແທນຊາຍແດນ, ອໍານາດການປົກຄອງຂັ້ນແຂວງຊາຍແດນ ຕ້ອງເຮັດຈົດໝາຍແຈ້ງ, ແນະນໍາ, ຊີ້ນໍາໄປຍັງອໍານາດການປົກຄອງທ້ອງຖິ່ນທຸກຂັ້ນຢູ່ຕາມບໍລິເວນຊາຍແດນຊາບ ແລະ ປະຕິບັດບັນດາວຽກງານຕາມທີ່ໄດ້ກໍານົດໄວ້ໃນຂໍ້ 2 ຂອງມາດຕານີ້ ພາຍໃນກໍານົດ 10 ວັນ.
2. ນັບແຕ່ວັນໄດ້ຮັບຈົດໝາຍແຈ້ງ ທີ່ໄດ້ກ່າວມາຂ້າງເທິງຂອງອໍານາດການປົກຄອງຂັ້ນແຂວງຊາຍແດນ, ໃຫ້ອໍານາດການປົກຄອງຂັ້ນທ້ອງຖິ່ນຢູ່ຕາມບໍລິເວນຊາຍແດນ ອອກໃບທະບຽນແຕ່ງດອງ ແລະ ເອກະສານອື່ນໆ ( ໃບແຈ້ງເກີດ, ສໍາມະໂນຄົວ ຫຼື ເອກະສານຕິດຕົວອື່ນໆ ) ຕາມເນື້ອໃນທີ່ໄດ້ກໍານົດໄວ້ໃນແບບຟອມ ພາຍໃນກໍານົດ 90 ວັນ.

## ມາດຕາ 10
## ການມອບ-ຮັບ ຜູ້ທີ່ບໍ່ໃຫ້ອາໄສຢູ່

1. ນັບແຕ່ວັນໄດ້ຮັບແຈ້ງການ ກ່ຽວກັບການຮັບຮອງບັນຊີລາຍຊື່ຜູ້ທີ່ຖືກສົ່ງຄືນປະເທດເດີມ ຈາກຫົວໜ້າຄະນະຜູ້ແທນຊາຍແດນ, ອໍານາດການປົກຄອງຂັ້ນແຂວງຊາຍແດນ ຕ້ອງເຮັດຈົດໝາຍແຈ້ງ, ແນະນໍາ, ຊີ້ນໍາໄປຍັງອໍານາດການປົກຄອງທ້ອງຖິ່ນທຸກຂັ້ນຢູ່ຕາມບໍລິເວນຊາຍແດນຊາບ ແລະ ປະຕິບັດບັນດາວຽກງານຕາມທີ່ໄດ້ກໍານົດໄວ້ໃນຂໍ້ 2 ຂອງມາດຕານີ້ ພາຍໃນກໍານົດ 10 ວັນ.
2. ນັບແຕ່ວັນໄດ້ຮັບແຈ້ງການຂ້າງເທິງຂອງອໍານາດການປົກຄອງທ້ອງຖິ່ນຂັ້ນແຂວງຊາຍແດນ, ໂດຍອີງຕາມບັນຊີລາຍຊື່ຜູ້ທີ່ຖືກສົ່ງກັບຄືນປະເທດເດີມ, ໃຫ້ອໍານາດການປົກຄອງທ້ອງຖິ່ນຢູ່ຕາມບໍລິເວນຊາຍແດນຕ້ອງສ້າງແຜນການມອບ-ຮັບ ພ້ອມທັງຄັດຕິດບັນຊີລາຍຊື່ພວກກ່ຽວ ແລ້ວລາຍງານເປັນລາຍລັກອັກສອນ ໃຫ້ອໍານາດການປົກຄອງຂັ້ນແຂວງຊາຍແດນທີ່ກ່ຽວຂ້ອງຊາບ ພາຍໃນກໍານົດ 30 ວັນ.
3. ເພື່ອສ້າງເງື່ອນໄຂອໍານວຍຄວາມສະດວກໃຫ້ແກ່ການຈັດວາງກໍາລັງ, ພາຫະນະໃຫ້ແກ່ການມອບ-ຮັບ ແລະ ຮັບປະກັນຄວາມເປັນລະບຽບຮຽບຮ້ອຍ, ຄວາມປອດໄພໃຫ້ຜູ້ທີ່ຖືກສົ່ງກັບຄືນປະເທດເດີມ, ໃຫ້ອໍານາດການປົກຄອງບັນດາຄູ່ແຂວງຊາຍແດນທີ່ກ່ຽວຂ້ອງ ເອກະພາບກັນດ້ວຍລາຍລັກອັກສອນກ່ຽວກັບບັນຊີລາຍຊື່, ວັນເວລາ ແລະ ດ່ານ ມອບ-ຮັບ ພາຍໃນກໍານົດ 15 ວັນ ກ່ອນການມອບ-ຮັບ.
4. ຝ່າຍຫວຽດນາມຈະຮັບພາລະທຸກການໃຊ້ຈ່າຍໃນການກິນຢູ່, ຢາປິ່ນປົວພະຍາດ ແລະ ການຂົນສົ່ງຄົນຫວຽດນາມກັບຄືນປະເທດ; ຊ່ວຍເຫຼືອຝ່າຍລາວທຸກການໃຊ້ຈ່າຍທັງໝົດກ່ຽວກັບການຈັດສົ່ງຄົນລາວກັບຄືນປະເທດຈົນເຖິງຈຸດມອບ-ຮັບ.

## ມາດຕາ 11
## ຜົນບັງຄັບໃຊ້ຂອງຂໍ້ຕົກລົງ

1. ຂໍ້ຕົກລົງສະບັບນີ້ ຈະມີຜົນບັງຄັບໃຊ້ນັບແຕ່ວັນທີ່ສອງຝ່າຍໄດ້ແຈ້ງເອກະສານທາງການສະບັບສຸດທ້າຍໃຫ້ກັນຊາບ ໂດຍຜ່ານທາງການທູດ ກ່ຽວກັບການສຳເລັດຂັ້ນຕອນພາຍໃນທາງດ້ານກົດໝາຍຂອງແຕ່ລະປະເທດ.

2. ຂໍ້ຕົກລົງສະບັບນີ້ ຈະມີຜົນບັງຄັບໃຊ້ພາຍໃນກຳນົດເວລາ 03 ປີ.

3. ຂໍ້ຕົກລົງສະບັບນີ້, ສອງຝ່າຍສາມາດປັບປຸງ, ເພີ່ມເຕີມ ຫຼື ຕໍ່ອາຍຸໄດ້ ຕາມການສະເໜີຂອງຝ່າຍໃດຝ່າຍໜຶ່ງ ຖ້າເຫັນວ່າມີຄວາມຈຳເປັນ.

ຂໍ້ຕົກລົງສະບັບນີ້, ເຮັດທີ່ ນະຄອນວິງ, ແຂວງເຫງະອານ, ສາທາລະນະລັດ ສັງຄົມນິຍົມຫວຽດນາມ, ໃນວັນທີ 08 ກໍລະກົດ 2013. ເປັນສອງສະບັບຕົ້ນ, ພາສາລາວ ແລະ ພາສາຫວຽດ, ທັງສອງສະບັບມີຄຸນຄ່າເທົ່າທຽມກັນ.

**ຕາງໜ້າລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ທອງລຸນ ສີສຸລິດ**
**ຮອງນາຍົກລັດຖະມົນຕີ**
**ລັດຖະມົນຕີວ່າການກະຊວງການຕ່າງປະເທດ**

**ຕາງໜ້າລັດຖະບານ ແຫ່ງ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ**

**ຟ້າມ ບິ່ງ ມິງ**
**ລັດຖະມົນຕີວ່າການ**
**ກະຊວງການຕ່າງປະເທດ**